ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************************

ສຳນັກງານ ນາຍົກລັດຖະມົນຕີ

ອົງການໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ ເລກທີ 992 /ສນຍ.ອປທ

ນະຄອນຫຼວງວຽງຈັນ, ວັນທີ 16 JUN 2011

# ຂໍ້ຕົກລົງ

## ວ່າດ້ວຍ ອັດຕາຄ່ານຳໃຊ້ ເລກໝາຍໂທລະຄົມ ແລະ ເລກລະຫັດອິນເຕີເນັດ

- ອີງຕາມດຳລັດຂອງ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 375/ນຍ, ລົງວັນທີ 22 ຕຸລາ ປີ 2007 ວ່າດ້ວຍ ການຈັດຕັ້ງຂອງ ອົງການ ໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງ ຊາດ.

**ລັດຖະມົນຕີ ປະຈຳ ສຳນັກງານ ນາຍົກລັດຖະມົນຕີ,**

**ຫົວໜ້າ ອົງການ ໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ**

**ອອກຂໍ້ຕົກລົງ**

## ໝວດທີ I

## ຂໍ້ບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດອັດຕາ ຄ່ານຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດ ອິນເຕີເນັດ ທີ່ໄດ້ຮັບອະນຸຍາດຈາກ ອປທ ແຫ່ງຊາດ ໃຫ້ສອດຄ່ອງກັບສະພາບການນຳໃຊ້ ໃນປະຈຸບັນ.

## ໝວດທີ II

## ການເກັບອັດຕາ ຄ່ານຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດອິນເຕີເນັດ

**ມາດຕາ 2 ການເກັບ ຄ່ານຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດອິນເຕີເນັດ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ທີ່ໄດ້ຮັບອະນຸຍາດ ນຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ລະຫັດອິນເຕີເນັດ ຂອງ ອປທ ແຫ່ງຊາດ ຈະຕ້ອງຈ່າຍ ຕາມອັດຕາ ທີ່ລະບຸໄວ້ ໃນຕາຕະລາງລຸ່ມນີ້.

**ຕາຕະລາງ 1**

ອັດຕາ ຄ່ານຳໃຊ້ ເລກໝາຍໂທລະຄົມ ຕໍ່ປີ

| ລ/ດ | ລາຍການ | ກີບ |
|---|---|---|
| 1 | ເລກໝາຍປະເທດ (856) | 10,000,000 |
| 2 | ເລກໝາຍແຂວງ (17 ແຂວງ ແລະ ນະຄອນຫຼວງ) | 1,000,000 |
| 3 | ເລກໝາຍເຄືອຂ່າຍ ໂທລະສັບມືຖື (ຫຼັກ 2, 5, 7, 9) | 5,000,000 |
| 4 | ເລກໝາຍໂທລະສັບຕັ້ງໂຕະ ຕໍ່ ເລກໝາຍ | 500 |
| 5 | ເລກໝາຍໂທລະສັບມືຖື ຕໍ່ ເລກໝາຍ | 1,000 |
| 6 | ເລກໝາຍສະເພາະ ຫຼື ເລກໝາຍ ສາມຕົວເລກ, ສີ່ຕົວເລກ ເລກ ອື່ນໆ | 100,000 |

**ຕາຕະລາງ 2**

ອັດຕາ ຄ່ານຳໃຊ້ ລະຫັດອິນເຕີເນັດ ຕໍ່ປີ

| ລ/ດ | ລາຍການ | ກີບ |
|---|---|---|
| 1 | ລະຫັດອິນເຕີເນັດສູງສຸດ | 10,000,000 |
| 2 | ລະຫັດອິນເຕີເນັດ ລະດັບສອງ | 5,000,000 |
| 3 | ລະຫັດອິນເຕີເນັດ ລະດັບສາມ | 1,000,000 |
| 4 | ລະຫັດອິນເຕີເນັດ ລະດັບ ສີ່ ແລະ ອື່ນໆ | 100,000 |

**ມາດຕາ 3 ເງື່ອນໄຂ ການນຳໃຊ້ ເລກໝາຍໂທລະຄົມ ແລະ ລະຫັດອິນເຕີເນັດ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ຕ້ອງຊຳລະ ຄ່ານຳໃຊ້ ເລກໝາຍໂທລະຄົມ ແລະ ເລກລະຫັດອິນເຕີເນັດ ໃຫ້ ອປທ ແຫ່ງຊາດ ກ່ອນເປີດໃຊ້ບໍລິການ.

## ໝວດທີ III

## ການຍົກເວັ້ນ ຄ່ານຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດອິນເຕີເນັດ

ມາດຕາ 4 ການຍົກເວັ້ນຄ່ານຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດອິນເຕີເນັດ

4.1 ຍົກເວັ້ນຄ່ານຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດອິນເຕີເນັດ ທີ່ໄດ້ກຳນົດຈາກ ອົງການໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ ເທົ່ານັ້ນ.

4.2 ຍົກເວັ້ນ ຄ່ານຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດອິນເຕີເນັດ ໃນວຽກງານສຸກເສີນ, ວຽກງານທົດລອງ ແລະ ຮັບໃຊ້ສະເພາະກິດ ຕາມຄຳສັ່ງຂອງລັດຖະບານ.

## ໝວດທີ IV

## ນະໂຍບາຍຕໍ່ ຜູ້ມີຜົນງານ ແລະ ມາດຕະການຕໍ່ ຜູ້ລະເມີດ

ມາດຕາ 5 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ທີ່ເສຍຄ່ານຳໃຊ້ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດອິນເຕີເນັດ ເປັນປົກກະຕິ ແລະ ປະກອບສ່ວນໃນການປົກປັກຮັກສາ ຊັບພະຍາກອນ ຂອງຊາດ ດ້ານໂທລະຄົມມະນາຄົມ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ.

ມາດຕາ 6 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ທີ່ບໍ່ໄດ້ຈ່າຍຄ່ານຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດອິນເຕີເນັດ ແຈ້ງຂໍ້ມູນບໍ່ຖືກຕ້ອງ, ປອມແປງເອກະສານ ຈະຖືກປັບໃໝ ແລະ ດຳເນີນຄະດີ ຕາມກົດໝາຍ ຂອງ ສປປ ລາວ.

## ໝວດທີ V
## ຂໍ້ບັນຍັດສຸດທ້າຍ

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມໂທລະຄົມມະນາຄົມ ແລະ ກົມອິນເຕີເນັດ, ອົງການໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ ຈັດຕັ້ງປະຕິບັດ, ເກັບຄ່ານຳໃຊ້ ເລກໝາຍໂທລະຄົມມະນາຄົມ ແລະ ເລກລະຫັດອິນເຕີເນັດ ແລະ ດຳເນີນການຄຸ້ມຄອງ ໃຫ້ເປັນເອກະພາບໃນຂອບເຂດ ທົ່ວປະເທດ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງ ແລະ ລະບຽບການ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ ປະຈຳ ສຳນັກງານ ນາຍົກລັດຖະມົນຕີ,**

**ຫົວໜ້າ ອປທ ແຫ່ງຊາດ**

**ຄຳລວດ ສິດລາກອນ**